# ແຜນປະຕິບັດງານແຫ່ງຊາດເພື່ອການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ

# National Roadmap for the implementation of the 2030 Agenda for Sustainable Development in the Lao PDR





# ແຜນປະຕິບັດງານແຫ່ງຊາດເພື່ອການຈັດຕັ້ງປະຕິບັດ ວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ

ກອງເລຂາຄະນະຊີ້ນຳລະດັບຊາດ
ເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ
(ກອງເລຂາ ປພຍ ແຫ່ງຊາດ)

ກໍລະກົດ 2020

ແຜນປະຕິບັດງານນີ້ໄດ້ຮັບການສະໜັບສະໜູນ ພາຍໃຕ້ ໂຄງການສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາ
ເສດຖະກິດ-ສັງຄົມແຫ່ງຊາດ ເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ການກ້າວຂຶ້ນເປັນປະເທດທີ່ມີ
ລາຍຮັບປານກາງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ 2017-2021
ອົງການ ສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ

**ສາລະບານ**


**ອະທິບາຍຄຳສັບ ...................................................................................... v**

**ບົດນຳ ................................................................................................. vi**

**ສະຫຼຸບຫຍໍ້ ......................................................................................... viii**

**ພາກ. ກ.......................................................................................................9**

**ແຜນປະຕິບັດງານແຫ່ງຊາດເພື່ອການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ແລະ ບັນດາເປົ້າໝາຍພັດທະນາແບບຍືນຍົງ ຢູ່ ສປປ ລາວ...............................................9**

**I. ປະຫວັດ ແລະ ຄວາມເປັນມາຂອງການຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ........................10**

**II.ຈຸດປະສົງ ແລະ ອົງປະກອບຂອງແຜນປະຕິບັດງານແຫ່ງຊາດເພື່ອການຈັດຕັ້ງປະຕິບັດ ປພຍ ...12**

**III. ວິທີການຈັດຕັ້ງປະຕິບັດຂອງແຜນປະຕິບັດງານ ປພຍ ແຫ່ງຊາດ....................................13**

3.1 ວາລະປີ 2030 ແລະ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ )NSEDP( ............................... 13

3.2 ການເຊື່ອມສານຕາມສາຍຕັ້ງ ແລະ ສາຍຂວາງ ............................................................... 13

3.3 ຂໍ້ມູນ ແລະ ສະຖິຕິ (ການຕິດຕາມກວດກາ, ການລາຍງານ ແລະ ຄວາມຮັບຜິດຊອບ) ...................... 14

3.4 ການລົມທົບທຶນແບບທຶນຮ່ວມ (ການສ້າງແຫຼ່ງທຶນການພັດທະນາເພື່ອອະນາຄົດ) ............................ 14

3.5 ການຮ່ວມມືທີ່ຫຼາຍຂຶ້ນ (ການປຶກສາຫາລື ແລະ ການຮ່ວມມືຫຼາຍຝ່າຍ) ........................................ 16

3.6 ການເຜີຍແຜ່ ແລະ ການປູກຈິດສຳນຶກ ........................................................................ 17

**ພາກ ຂ. .....................................................................................................18**

**ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ວາລະ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ ..........................................................................................18**

1. ພາກສະເໜີຈຸດປະສົງ ແລະ ວິໄສທັດ ຂອງແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ວາລະ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ ................................................ 19

1.1 ຈຸດປະສົງ: ........................................................................................ 19

1.2 ວິໄສທັດກ່ຽວກັບ ເປົ້າໝາຍການພັດທະນາແບບຍືນຍົງຢູ່ ສປປ ລາວ: ..................................... 22

2. ບັນດາເປົ້າໝາຍ...................................................................................... 22

3. ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ........................................................... 22

4. ບູລິມະສິດຂອງຜູ້ມີສ່ວນຮ່ວມ.................................................................... 25

5. ການຕິດຕາມກວດກາ ແລະ ການປະເມີນຜົນ .......................................................28

**ພາກ ຄ. .....................................................................................................29**

**ຂອບເວລາການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ແລະ ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ ............29**

ເອກະສານຊ້ອນທ້າຍ ........................................................................................ 38
ເອກະສານອ້າງອີງ........................................................................................... 40

# ອະທິບາຍຄໍາສັບ

| | |
|---|---|
| CSO | ອົງການຈັດຕັ້ງທາງສັງຄົມ |
| DFAA | ການປະເມີນຜົນປະເມີນຜົນທາງດ້ານການເງິນ ແລະ ການຊ່ວຍເຫຼືອເພື່ອການພັດທະນາ |
| INGO | ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ |
| M&E | ການຕິດຕາມ ແລະ ປະເມີນຜົນ |
| MOFA | ກະຊວງການຕ່າງປະເທດ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| ODA | ການຊ່ວຍເຫຼືອທາງການເພື່ອການພັດທະນາ |
| RTM | ກອງປະຊຸມໂຕະມົນ |
| SDGs | ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) |
| SWOT | ຈຸດດີ, ຈຸດອ່ອນ, ກາລະໂອກາດ, ຄວາມສ່ຽງ |
| UNCT | ທີມງານ ອົງການ ສປຊ ປະຈໍາ ປະເທດ |
| VNR | ບົດລາຍງານແຫ່ງຊາດແບບສະໝັກໃຈ |

# ບົດນຳ

'ການພັດທະນາແບບຍືນຍົງ' ໄດ້ກາຍເປັນພື້ນຖານທີ່ສຳຄັນສຳລັບການຮ່ວມມືຂອງວົງຄະນາຍາດສາກົນໃນປັດຈຸບັນ ເພື່ອສົ່ງເສີມການພັດທະນາໃຫ້ໄປຕາມເສັ້ນທາງແບບຍືນຍົງ ກໍ່ຄືການພັດທະນາໃນປັດຈຸບັນ ຈະຕ້ອງບໍ່ໄປບັ່ນທອນໂອກາດ ແລະ ຄວາມສາມາດໃນການພັດທະນາຂອງຄົນຮຸ່ນຕໍ່ໄປໃນອະນາຄົດ. ນັບຕັ້ງແຕ່ການຮັບຮອງເອົາ ວາລະ 2030 ເພື່ອການພັດທະນາແບບຍືນຍົງ ໃນປີ 2015, ລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ມີຄວາມໝາຍໝັ້ນອັນແຮງກ້າ ໃນການຈັດຕັ້ງປະຕິບັດວາລະການພັດທະນາຂອງສາກົນ ຄຽງຄູ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ໂດຍສະເພາະແມ່ນໄດ້ຮັບຮອງເອົາ ປພຍ ແຫ່ງຊາດທີ 18 ພາຍໃຕ້ຫົວຂໍ້ "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ (ລບຕ)". ສປປ ລາວ ເປັນໜຶ່ງໃນບັນດາປະເທດທຳອິດທີ່ໄດ້ເຊື່ອມສານເອົາບັນດາ ປພຍ ເຂົ້າໃນວາລະພັດທະນາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແມ່ນໄດ້ຮັບໂຮມເອົາບັນດາ ປພຍ ເຂົ້າໃນສາມວຽກງານຈຸດສຸມ, ຊຶ່ງແຕ່ລະວຽກງານຈຸດສຸມແມ່ນສອດຄ່ອງກັບສາມເສົາຄ້ຳຂອງ ວາລະ 2030 ຄື: ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ. ເພື່ອບັນລຸໄດ້ບັນດາ ປພຍ ນັ້ນ, ລັດຖະບານ ຍັງໄດ້ໃຫ້ຄວາມສຳຄັນຕໍ່ການນຳໃຊ້ວິທະຍາສາດ ເຕັກໂນໂລຊີ ແລະ ນະວັດຕະກຳ.

ໃນວັນທີ 20 ກັນຍາ 2017, ປະທານປະເທດແຫ່ງ ສປປ ລາວ ໄດ້ອອກລັດຖະດຳລັດແຕ່ງຕັ້ງ ຄະນະຊີ້ນຳລະດັບຊາດ ໃນການຈັດຕັ້ງປະຕິບັດ ປພຍ ໂດຍມີ ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ເປັນປະທານ ແລະ ປະກອບມີສະມາຊິກຈາກບັນດາກະຊວງ, ອົງການຈັດຕັ້ງທຽບເທົ່າກະຊວງ ແລະ ອົງການຈັດຕັ້ງມະຫາຊົນປະກອບເຂົ້າເປັນຄະນະ. ກະຊວງການຕ່າງປະເທດ ແລະ ກະຊວງແຜນການ ແລະ ການລົງທຶນ ໄດ້ຮັບການແຕ່ງຕັ້ງໃຫ້ເປັນກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ. ພ້ອມດຽວກັນນັ້ນ, ບັນດາຈຸດປະສານງານ ປພຍ ໃນແຕ່ລະກະຊວງ ແລະ ຂະແໜງການກໍ່ໄດ້ຮັບການສ້າງຕັ້ງຂຶ້ນເຊັ່ນດຽວກັນ ເພື່ອເປັນເຈົ້າການໃນການນຳພາການຈັດຕັ້ງປະຕິບັດແຕ່ລະ ປພຍ, ຮັບປະກັນໃຫ້ມີການປະສານງານ ແລະ ການຮ່ວມມືທີ່ດີ ພາຍໃນລັດຖະບານ.

ພາຍຫຼັງການນຳສະເໜີ ບົດລາຍງານແຫ່ງຊາດແບບສະໝັກໃຈສະບັບທຳອິດ ໃນປີ 2018, ປັດຈຸບັນ ສປປ ລາວ ກໍ່ໄດ້ສືບປະຕິບັດວຽກງານຢ່າງໃກ້ຊິດກັບບັນດາອົງການເຄືອຂ່າຍ ສປຊ ແລະ ບັນດາຄູ່ຮ່ວມພັດທະນາອື່ນໆ ເພື່ອຮັບປະກັນໃນການຮັບເອົາການຊ່ວຍເຫຼືອທີ່ຈຳເປັນໃນການເລັ່ງລັດການຈັດຕັ້ງປະຕິບັດວາລະ 2030. ພ້ອມດຽວກັນນັ້ນ, ລັດຖະບານໄດ້ສ້າງຕັ້ງບັນດາກົນໄກເພື່ອເຮັດວຽກຮ່ວມກັບອົງການຈັດຕັ້ງທາງສັງຄົມເພື່ອຮັບປະກັນການມີສ່ວນຮ່ວມຢ່າງກວ້າງຂວາງຂອງທຸກພາກສ່ວນທີ່ກ່ຽວຂ້ອງ. ການຈັດຕັ້ງປະຕິບັດ ປພຍ ເປັນໂອກາດທີ່ດີສຳລັບການຮວບຮວມເອົາທຸກພາກສ່ວນເພື່ອສຸມໃສ່ການຈັດຕັ້ງປະຕິບັດບັນດາ ປພຍ ຢ່າງເປັນຂະບວນການໃນຂອບເຂດທົ່ວປະເທດ. ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ກໍ່ໄດ້ມີການຮ່ວມມືຢ່າງແໜ້ນແຟ້ນກັບວົງຄະນາຍາດສາກົນໃນຫຼາຍລະດັບ, ນັບແຕ່ລະດັບ ກອງເລຂາຄະນະຊີ້ນຳລະດັບຊາດ, ລະດັບກະຊວງ, ກົມກອງ ຈົນເຖິງລະດັບກອງປະຊຸມລະຫວ່າງຂະແໜງການທີ່ລວມເອົາໜ່ວຍງານທີ່ກ່ຽວຂ້ອງທັງໝົດ.

ການຂະຫຍາຍຕົວຢ່າງເຂັ້ມແຂງທາງດ້ານເສດຖະກິດໃນຊຸມປີຜ່ານມາ ໂດຍສຸມໃສ່ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ໄດ້ເຮັດໃຫ້ ສປປ ລາວ ບັນລຸສອງໃນສາມເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ເປັນຄັ້ງທຳອິດ ອີງຕາມການປະເມີນຜົນຂອງຄະນະກຳມະການນະໂຍບາຍເພື່ອການພັດທະນາຂອງອົງການ ສປຊ ໃນຕົ້ນປີ 2018. ປັດຈຸບັນ, ລັດຖະບານ ກຳລັງສຸມໃສ່ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ເຊິ່ງເປັນບຸລິມະສິດທີ່ສຳຄັນໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ການກະກຽມແຜນເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ X ໃນອະນາຄົດ.

ແຜນປະຕິບັດງານສະບັບນີ້ ໄດ້ຮ່າງຂຶ້ນຢ່າງລະອຽດ ເພື່ອເປັນບ່ອນອີງໃຫ້ທຸກຂະແໜງການ ແລະ ທຸກພາກສ່ວນໃນສັງຄົມ ໃນການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ໃຫ້ສອດຄ່ອງ ແລະ ແທດເໝາະກັບການພັດທະນາຕົວຈິງຂອງປະເທດເຮົາ. ສະນັ້ນ, ແຜນປະຕິບັດງານສະບັບນີ້ນັບວ່າເປັນເອກະສານທີ່ສຳຄັນທີ່ສະແດງໃຫ້ເຫັນເຖິງຄວາມໝາຍໝັ້ນຂອງ ສປປ ລາວ ໃນການບັນລຸ ປພຍ, ຈຶ່ງຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມ, ລັດຖະບານ ແລະ ເອກະຊົນ ເປັນເຈົ້າການເພື່ອຜັກດັນການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆ, ລວມທັງການຈັດຕັ້ງປະຕິບັດແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ປພຍ ໃຫ້ປະສົບຜົນເປັນຈິງ, ກໍຄືການຊຸກຍູ້ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ປພຍ ແຕ່ລະເປົ້າໝາຍ ແລະ ສາມາດບັນລຸໄດ້ຕາມຄາດໝາຍທີ່ຕັ້ງໄວ້.



**ທອງລຸນ ສີສຸລິດ**

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

**ປະທານຄະນະຊີ້ນຳລະດັບຊາດເພື່ອການຈັດຕັ້ງປະຕິບັດ ປພຍ**

# ສະຫຼຸບຫຍໍ້

ແຜນປະຕິບັດງານແຫ່ງຊາດເພື່ອຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ (National Roadmap for the Implementation of the 2030 Agenda for Sustainable Development in the Lao PDR) ແມ່ນເອກະສານທີ່ສຳຄັນທີ່ສະແດງໃຫ້ເຫັນເຖິງຄຳໝາຍໝັ້ນຂອງ ສປປ ລາວ ໃນການບັນລຸບັນດາເປົ້າໝາຍການພັດທະນາແບບຍືນຍົງ (ປພຍ), ໂດຍສະເພາະແມ່ນການຜັນຂະຫຍາຍເຈດຈຳນົງ ຂອງ ບົດລາຍງານແຫ່ງຊາດແບບສະໝັກໃຈສະບັບທຳອິດ ທີ່ ສປປ ລາວ ໄດ້ນຳສະເໜີຢູ່ທີ່ ກອງປະຊຸມເວທີການເມືອງລະດັບສູງ ທີ່ຈັດຂຶ້ນຢູ່ ນິວຢອກ ໃນປີ 2018.

ແຜນປະຕິບັດງານແຫ່ງຊາດມີເນື້ອໃນແບ່ງອອກເປັນ 3 ພາກຫຼັກຄື: ພາກ ກ. ແຜນປະຕິບັດງານການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ເປັນແຜນງານໃຫຍ່ ແລະ ກວມລວມເອົາພາກທີສອງຄື ພາກ ຂ. ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງ ແລະ ພາກ ຄ. ຂອບເວລາການຈັດຕັ້ງປະຕິບັດແຜນປະຕິບັດງານ ປພຍ ແຫ່ງຊາດ ແລະ ແຜນດຳເນີນງານການສື່ສານ ໂຄະສນາ ແລະ ເຜີຍແຜ່ວາລະປີ 2030 ເພື່ອການພັດທະນາແບບຍືນຍົງ. ຈຸດປະສົງຫຼັກຂອງແຜນປະຕິບັດງານນີ້ ແມ່ນສະເໜີໃຫ້ເຫັນເຖິງບັນດາກິດຈະກຳທີ່ສຳຄັນ ແລະ ການກຳນົດໄລຍະເວລາສຳລັບການເຊື່ອມໂຍງ, ການຈັດຕັ້ງປະຕິບັດ ແລະ ການລາຍງານວາລະປີ 2030 ແລະ ປພຍ ຢູ່ ສປປ ລາວ, ໂດຍຍົກໃຫ້ເຫັນເຖິງວິທີການຈັດຕັ້ງປະຕິບັດ ລວມທັງ ແນວທາງການເຊື່ອມສານ, ການສ້າງ ແລະ ເກັບກຳຖານຂໍ້ມູນ, ວິທີການລາຍງານ, ການປະເມີນ ແລະ ຕິດຕາມ, ການສ້າງ ແລະ ການສະໜອງແຫຼ່ງທຶນທີ່ຈຳເປັນ, ແທດເໝາະ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການບັນລຸ ປພຍ ຄຽງຄູ່ກັບການບັນລຸບັນດາຄາດໝາຍແຫ່ງຊາດ.

ສຳລັບພາກ ຂ. ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງຢູ່ ສປປ ລາວ ແມ່ນເອກະສານທີ່ຜັນຂະຫຍາຍຈາກແຜນປະຕິບັດງານແຫ່ງຊາດ ແລະ ບົດລາຍງານແຫ່ງຊາດແບບສະໝັກໃຈເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ. ຈຸດປະສົງແມ່ນເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບ ປພຍ ບົນພື້ນຖານຫຼັກການເປັນຄູ່ຮ່ວມງານທີ່ມີໝາກຜົນ. ແຜນດຳເນີນງານນີ້ປະກອບດ້ວຍ 4 ເປົ້າໝາຍຫຼັກ ເຊິ່ງແຕ່ລະເປົ້າໝາຍແມ່ນສະແດງໃຫ້ເຫັນເຖິງຫຼັກການພື້ນຖານການມີສ່ວນຮ່ວມເພື່ອດຳເນີນແຜນປະຕິບັດງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ທີ່ມີປະສິດທິພາບ ແລະ ຍືນຍົງ ເພື່ອຍົກລະດັບຄວາມຮັບຮູ້ກ່ຽວກັບ ປພຍ, ຊຶ່ງເປັນອົງປະກອບຫຼັກໃນການບັນລຸ ປພຍ. ຄຽງຄູ່ກັນນັ້ນ, ວຽກງານຕິດຕາມ ແລະ ປະເມີນຜົນແຜນຍຸດທະສາດການສື່ສານ, ໂຄສະນາ ແລະ ເຜີຍແຜ່ ຈະສ້າງຄວາມເຊື່ອໝັ້ນ ແລະ ຄວາມໂປ່ງໃສຕໍ່ບັນດາກິດຈະກຳການສື່ສານ, ໂຄສະນາ ແລະ ເຜີຍແຜ່ ປພຍ.

ນອກຈາກນັ້ນ, ຜູ້ມີສ່ວນຮ່ວມຫຼັກ ແລະ ເນື້ອໃນສຳຄັນຈະຖືກກຳນົດເພື່ອໃຫ້ສອດຄ່ອງກັບການໂຄສະນາ ປພຍ ແລະ ການນຳໃຊ້ແຫຼ່ງທຶນຢ່າງມີປະສິດທິພາບ ແນ່ໃສ່ສ້າງຜົນປະໂຫຍດສູງສຸດໃຫ້ແກ່ປະຊາຊົນບັນດາເຜົ່າ. ດັ່ງນັ້ນ, ຄູ່ຮ່ວມງານທຸກພາກສ່ວນຕ້ອງສະແດງເຈດຈຳນົງ ແລະ ເຄົາລົບເຊິ່ງກັນ ແລະ ກັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ຂະບວນການວາງແຜນ, ການເຊື່ອມສານ ແລະ ການຮ່ວມມືໃຫ້ແກ່ກຸ່ມຄົນທຸກຍາກທີ່ສຸດ ແລະ ຜູ້ທີ່ດ້ອຍໂອກາດ ໂດຍສະເພາະແມ່ນກຸ່ມຄົນທີ່ອາໄສຢູ່ເຂດພູສູງ ແລະ ເຂດຫ່າງໄກສອກຫຼີກ.

ທ້າຍສຸດນີ້, ເພື່ອໃຫ້ແຜນດຳເນີນງານດັ່ງກ່າວປະກົດຜົນເປັນຈິງໄດ້ນັ້ນ ຈຶ່ງຮຽກຮ້ອງໃຫ້ທຸກພາກສ່ວນ, ທີ່ມີຄວາມສົນໃຈຕໍ່ກິດຈະກຳທີ່ຕິດພັນກັບ ປພຍ ລວມທັງ ພາກເອກະຊົນ ໃນການປະກັນແຫຼ່ງທຶນໃຫ້ພຽງພໍເພື່ອຊຸກດັນບັນດາກິດຈະກຳຕ່າງໆ ແລະ ສື່ມວນຊົນຂອງລັດ ເປັນເຈົ້າການໃນການສື່ສານ, ໂຄສະນາ ແລະ ເຜີຍແຜ່ໃຫ້ປະສົບຜົນເປັນຈິງ ແລະ ສາມາດບັນລຸໄດ້ຕາມຄາດໝາຍທີ່ຕັ້ງໄວ້.

# ພາກ. ກ

# ແຜນປະຕິບັດງານແຫ່ງຊາດເພື່ອການຈັດຕັ້ງປະຕິບັດ ວາລະປີ 2030 ເພື່ອການພັດທະນາແບບຍືນຍົງແລະ ບັນດາເປົ້າໝາຍພັດທະນາແບບຍືນຍົງ ຢູ່ ສປປ ລາວ






## I. ປະຫວັດ ແລະ ຄວາມເປັນມາຂອງການຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ

ໃນປີ 2015, ລັດຖະບານແຫ່ງ ສປປ ລາວ ໄດ້ຮັບຮອງເອົາວາລະ 2030 ເພື່ອການພັດທະນາແບບຍືນຍົງ ແລະ ໄດ້ໃຫ້ຄຳໝັ້ນສັນຍາຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດວາລະດັ່ງກ່າວເພື່ອໃຫ້ບັນລຸ ປພຍ. ໃນວັນທີ 20 ກັນຍາ 2017, ປະທານປະເທດແຫ່ງ ສປປ ລາວ ໄດ້ອອກລັດຖະດຳລັດວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ ໂດຍການເປັນປະທານຂອງ ທ່ານ ນາຍົກລັດຖະມົນຕີ ພ້ອມດ້ວຍຄະນະຈາກກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການຈັດຕັ້ງມະຫາຊົນທີ່ກ່ຽວຂ້ອງ. ນອກຈາກນັ້ນ, ຄະນະຊີ້ນຳລະດັບຊາດ ຍັງໄດ້ແຕ່ງຕັ້ງກອງເລຂາຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ ຊຶ່ງປະກອບມີ 2 ກະຊວງຄື: ກະຊວງການຕ່າງປະເທດ ແລະ ກະຊວງແຜນການ ແລະ ການລົງທຶນ, ພ້ອມດ້ວຍຈຸດປະສານງານຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ຂະແໜງການກ່ຽວຂ້ອງ ເພື່ອເປັນເສນາທິການ ແລະ ເປັນເຈົ້າການໃນການປະສານງານພາຍໃນກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ, ພ້ອມທັງຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ ໃຫ້ສຳເລັດຜົນເປັນຢ່າງດີ.

ສປປ ລາວ ເປັນໜຶ່ງໃນປະເທດທຳອິດທີ່ລິເລີ່ມການເຊື່ອມສານ ປພຍ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) ຄັ້ງທີ VIII, ແລະ ໄດ້ຮອບຮອມເອົາບັນດາ ປພຍ ເຂົ້າໃນສາມວຽກງານຈຸດສຸມ ຊຶ່ງແຕ່ລະວຽກງານຈຸດສຸມນັ້ນແມ່ນສອດຄ່ອງກັບສາມເສົາຄ້ຳຂອງວາລະ 2030 ຄື: ດ້ານເສດຖະກິດ, ດ້ານສັງຄົມ ແລະ ດ້ານສິ່ງແວດລ້ອມ. ປະມານ 60 ສ່ວນຮ້ອຍ ຂອງຕົວຊີ້ບອກໄດ້ຮັບການເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII ຊຶ່ງສະແດງໃຫ້ເຫັນເຖິງຄຳໝັ້ນສັນຍາຢ່າງຕັ້ງໜ້າຂອງລັດຖະບານໃນການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງ. ນອກຈາກນັ້ນ, ບັນດາຕົວຊີ້ບອກ ປພຍ ທີ່ຍັງບໍ່ທັນໄດ້ເຊື່ອມສານເຂົ້າກັບ ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VIII ແມ່ນຈະສືບຕໍ່ໄດ້ຮັບການເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ແລະ X ຕໍ່ໄປ.

ລັດຖະບານໄດ້ສຳເລັດບົດລາຍງານແຫ່ງຊາດແບບສະໝັກໃຈສະບັບທຳອິດ (VNR) ໃນການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງ ໃນເດືອນມິຖຸນາ 2018 ແລະ ໄດ້ນຳສະເໜີໃນກອງປະຊຸມເວທີການເມືອງລະດັບສູງ (HLPF) ທີ່ ນິວຢອກ, ປະເທດສະຫະລັດອາເມລິກາ. ບົດລາຍງານແຫ່ງຊາດແບບສະໝັກໃຈຂອງ ສປປ ລາວ ເປັນ ບົດລາຍງານທີ່ສາກົນໃຫ້ການຍອມຮັບ. ຄຽງຄູ່ກັບຜົນສຳເລັດນັ້ນ, ລັດຖະບານ ໄດ້ສຸມໃສ່ເຮັດວຽກຢ່າງໃກ້ຊິດກັບບັນດາພາກສ່ວນກ່ຽວຂ້ອງ ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບ ປພຍ ໃຫ້ສອດຄ່ອງກັບຫຼັກການ ***"ພວກເຮົາພ້ອມກັນກ້າວໄປ" (Leaving No One Behind)*** ເພື່ອການພັດທະນາທີ່ຍືນຍົງ.

# SUSTAINABLE DEVELOPMENT GOALS

# ເປົ້າໝາຍການພັດທະນາແບບຍືນຍົງ



## ຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຢູ່ ສປປ ລາວ




## II. ຈຸດປະສົງ ແລະ ອົງປະກອບຂອງແຜນປະຕິບັດງານແຫ່ງຊາດເພື່ອການຈັດຕັ້ງປະຕິບັດ ປພຍ

ແຜນປະຕິບັດງານແຫ່ງຊາດສະບັບນີ້ແມ່ນສະເໜີໃຫ້ເຫັນເຖິງບັນດາກິດຈະກຳທີ່ສຳຄັນ ແລະ ກຳນົດໄລຍະເວລາສຳລັບການເຊື່ອມໂຍງ, ການຈັດຕັ້ງປະຕິບັດ ແລະ ການລາຍງານວາລະປີ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງຢູ່ ສປປ ລາວ, ໂດຍອີງໃສ່ລຳດັບບູລິມະສິດທີ່ໄດ້ກຳນົດໄວ້ໃນການປຶກສາຫາລືຫຼາຍຝ່າຍໃນປີ 2017.

ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ (NSEDP) ໄດ້ກຳນົດໄລຍະເວລາພື້ນຖານສຳລັບການປະຕິບັດກິດຈະກຳທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວາລະປີ 2030. ລຳດັບຂອງແຕ່ລະໄລຍະເວລາຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ (NSEDP) ໃນປັດຈຸບັນແມ່ນກົງກັບລຳດັບຂອງແຕ່ລະໄລຍະເວລາການຈັດຕັ້ງປະຕິບັດວາລະປີ 2030 ໃນສາມຊ່ວງໄລຍະເວລາ 5 ປີ ຄື: ແຜນ NSEDP ທີ VIII ກວມເອົາແຕ່ປີ 2016-2020, NSEDP ທີ IX ກວມເອົາ 2021-2025 ແລະ NSEDP ທີ X ກວມເອົາ 2026-2030.

## III. ວິທີການຈັດຕັ້ງປະຕິບັດຂອງແຜນປະຕິບັດງານ ປພຍ ແຫ່ງຊາດ

ແຜນປະຕິບັດງານສະບັບນີ້ ແມ່ນແຜນງານທີ່ມີຄວາມຕໍ່ເນື່ອງ ແລະ ເຊື່ອມໂຍງເຊິ່ງກັນ ແລະ ກັນ, ເຊິ່ງມີຄວາມຈຳເປັນຕ້ອງພິຈາລະນາບັນດາອີງປະກອບດັ່ງຕໍ່ໄປນີ້:

### 3.1 ວາລະປີ 2030 ແລະ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ (NSEDP)

- ການເສີມສ້າງຄວາມເຂັ້ມແຂງໃນການເຊື່ອມສານລະຫວ່າງວາລະປີ 2030 ແລະ NSEDP ທີ VIII, IX ແລະ X, ໂດຍເນັ້ນໃສ່ການຫັນປ່ຽນ ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.

### 3.2 ການເຊື່ອມສານຕາມສາຍຕັ້ງ ແລະ ສາຍຂວາງ

- ສືບຕໍ່ການເຊື່ອມສານບັນດາຕົວຊີ້ບອກ ປພຍ ເຂົ້າໃນແຜນຍຸດທະສາດຂອງທ້ອງຖິ່ນ ແລະ ຂະແໜງການ;
- ສືບຕໍ່ການສົ່ງເສີມການຮ່ວມມືລະຫວ່າງຂະແໜງການ, ລະຫວ່າງສາຍງານ ຜ່ານຂະບວນການປຶກສາຫາລືແບບໂຕະມົນ. ສ້າງຄວາມເຂັ້ມແຂງໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງເພື່ອແກ້ໄຂບັນຫາຫຼັກທີ່ສົ່ງຜົນກະທົບຕໍ່ກັບບັນດາ ປພຍ, ເຊັ່ນ: ກ່ຽວກັບການຮັບປະກັນດ້ານສະບຽງອາຫານ ແລະ ໂພຊະນາການ (ປພຍ 2) ເຊິ່ງເປັນຕົວຊີ້ບອກທີ່ຈະສົ່ງເສີມ ປພຍ ໃນການແກ້ບັນຫາຄວາມທຸກຍາກ, ສຸຂະພາບ ແລະ ການສຶກສາ ແລະ ຈະເປັນຕົວພັກດັນໃນການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ວຽກງານກ່ຽວກັບບັນຫາໄວໜຸ່ມຍິງ; ການຈັດການບັນຫາການແຕ່ງດອງກ່ອນໄວອັນຄວນ, ການສຶກສາຂອງໄວໜຸ່ມຍິງ, ສຸຂະພາບ ແລະ ໂພຊະນາການ ຈະຊ່ວຍປະກອບສ່ວນເຂົ້າໃນການບັນລຸຫຼາຍ ປພຍ;
- ເສີມສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງໃຫ້ແກ່ສະຖາບັນເພື່ອການຈັດຕັ້ງປະຕິບັດ ປພຍ, ໂດຍສະເພາະກອງເລຂາຄະນະຊີ້ນຳລະດັບຊາດເພື່ອການຈັດຕັ້ງປະຕິບັດ ປພຍ ໂດຍມີ ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ ແລະ ສູນສະຖິຕິແຫ່ງຊາດ ຊຶ່ງເປັນຂະແໜງການຫຼັກໃນການຜັນຂະຫຍາຍວຽກງານ ປພຍ. ນອກຈາກນັ້ນ, ຕ້ອງເພີ່ມທະວີການຮ່ວມມືລະຫວ່າງ ບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງ, ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ - ໂດຍສະເພາະແມ່ນບົດບາດ ແລະ ໜ້າທີ່ທີ່ຊັດເຈນຂອງຈຸດປະສານງານ ປພຍ;
- ກຳນົດນິຍາມກ່ຽວກັບພາລະບົດບາດ, ສິດໜ້າທີ່ ແລະ ຄວາມຮັບຜິດຊອບແຜນ NSEDP, ແຕ່ລະ ປພຍ ແລະ ແຕ່ລະຕົວຊີ້ບອກມີຄວາມຊັດເຈນ ແລະ ຈະແຈ້ງ;
- ຕົວຊີ້ບອກ ປພຍ ສາມາດຈັດບູລິມະສິດ ແລະ ຈັດລຽງຄວາມສຳຄັນ. ຈັດໃຫ້ບູລິມະສິດຕໍ່ຕົວຊີ້ບອກ ປພຍ ທີ່ເຊື່ອມສານກັບການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາທີ່ໄດ້ຖືກເຊື່ອມສານເຂົ້າໃນແຜນ NSEDP ແລ້ວ;
- ສ້າງຄວາມລະອຽດ ແລະ ຄວາມກະຈ່າງແຈ້ງກ່ຽວກັບການເຊື່ອມໂຍງຂອງບັນດາເປົ້າໝາຍ ແລະ ການວິເຄາະ ແລະ ການປັບປຸງກ່ຽວກັບນະໂຍບາຍ, ແຜນວຽກ ແລະ ໂຄງການທີ່ສຳຄັນທີ່ສົ່ງຜົນຕໍ່ ປພຍ ແຫ່ງຊາດ ຖືວ່າເປັນສິ່ງສຳຄັນ. ການສ້າງຄວາມເຂັ້ມແຂງໃຫ້ກັບສະຖາບັນທີ່ເປັນຕົວເຊື່ອມໂຍງລະຫວ່າງ ຍຸດທະສາດການພັດທະນາແບບຍືນຍົງ ແລະ ສະໜັບສະໜູນຂະບວນການໃນທຸກຂັ້ນ ກໍ່ເຫັນວ່າມີຄວາມຈຳເປັນເຊັ່ນດຽວກັນ;

- ການສະໜັບສະໜູນດ້ານການເງິນ ແລະ ການສ້າງຂີດຄວາມສາມາດໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ເພື່ອເຊື່ອມສານ ວາລະປີ 2030 ແລະ ເງື່ອນໄຂການພັດທະນາແບບຍືນຍົງ ເຂົ້າໃນວຽກງານຂອງພວກເຂົາ ໂດຍນຳໃຊ້ກົນໄກທີ່ມີຢູ່ແລ້ວ ເຊັ່ນ: ການປະຕິບັດວຽກງານສາມສ້າງ.

### 3.3 ຂໍ້ມູນ ແລະ ສະຖິຕິ (ການຕິດຕາມກວດກາ, ການລາຍງານ ແລະ ຄວາມຮັບຜິດຊອບ)

- ການວາງແຜນວຽກງານ ແລະ ຂັ້ນຕອນຕໍ່ໄປຂອງບົດລາຍງານ ປພຍ ແຫ່ງຊາດແບບສະໝັກໃຈ ປີ 2018 ແມ່ນການສ້າງຖານຂໍ້ມູນທີ່ມີຄຸນນະພາບ ແລະ ການໄຈ້ແຍກທີ່ລະອຽດແມ່ນເປັນສິ່ງຈຳເປັນເພື່ອ ຮັບປະກັນການບັນລຸເປົ້າໝາຍທີ່ວາງໄວ້;
- ການຈຳແນກ, ບົ່ງຂໍ້ມູນ ແລະ ການແກ້ໄຂບັນຫາຊ່ອງວ່າງຄວາມແຕກໂຕນຂອງຂໍ້ມູນແມ່ນນັບວ່າເປັນ ບັນຫາທີ່ເລັ່ງດ່ວນ ແລະ ຈຳເປັນຕ້ອງໄດ້ແກ້ໄຂ;
- ການກໍ່ສ້າງແບບຮ່າງພື້ນຖານ (ມາດຕະຖານ) ຂອງຕົວຊີ້ບອກແຫ່ງຊາດ ແລະ ການເກັບກຳຂໍ້ມູນເພື່ອ ຮັບປະກັນການປະເມີນຜົນທີ່ເໝາະສົມ (ຫຼີກລ້ຽງການນຳໃຊ້ວິທີການ ແລະ ຂະບວນການທີ່ແຕກຕ່າງ ກັນ);
- ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ກັບລະບົບສະຖິຕິຂອງປະເທດ;
- ກອບກົດຫມາຍ ແລະ ນະໂຍບາຍສຳລັບສະຖິຕິ ຄວນສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການ ຕິດຕາມ ແລະ ການປະເມີນຜົນຂອງ ປພຍ, ເຊິ່ງລວມທັງກົດໝາຍສະຖິຕິ, ແຜນພັດທະນາສະຖິຕິ 5 ປີ ແລະ ຍຸດທະສາດການພັດທະນາສະຖິຕິແຫ່ງຊາດ 2010-2020;
- ບັນດາບູລິມະສິດຂອງສູນສະຖິຕິແຫ່ງຊາດຂອງ ສປປ ລາວ ເພື່ອສ້າງຄວາມເຂັ້ມແຂງໃຫ້ກັບການຈັດ ລະບົບ ສະຖິຕິແຫ່ງຊາດມີ (i) ແຜນປະຕິບັດງານເພື່ອຕິດຕາມ ປພຍ, (ii) ການສ້າງຂີດຄວາມອາດສາມາດ ແລະ (iii) ການປະເມີນ ແລະ ປັບປຸງຄຸນນະພາບຂອງຂໍ້ມູນ. ສູນສະຖິຕິແຫ່ງຊາດ ຈະພັດທະນາແຜນງານ ທີ່ມີຄຸນຄ່າ ແລະ ສຸມໃສ່ການຕິດຕາມ ປພຍ, ຄຽງຄູ່ກັບການສຳຫຼວດຕ່າງໆຈະເປັນຕົວຊ່ວຍທີ່ສຳຄັນໃນ ການສະໜອງຂໍ້ມູນໃຫ້ແກ່ຕົວຊີ້ບອກ ປພຍ ແລະ ຈະເຮັດໃຫ້ການບໍລິຫານ ແລະ ຈັດການຂໍ້ມູນມີຄວາມ ເຂັ້ມແຂງຫຼາຍຂຶ້ນ;
- ຂໍ້ມູນຈະເປັນຕົວຂັບເຄື່ອນບັນດານະໂຍບາຍ ແລະ ການຕັດສິນໃຈໄດ້ຢ່າງມີປະສິດທິຜົນ ຖ້າເປັນໄປຕາມ ກຳນົດເວລາທີ່ວາງໄວ້;
- ການນຳໃຊ້ ແລະ ໝູນໃຊ້ປະໂຫຍດໃຫ້ໄດ້ຫຼາຍທີ່ສຸດຈາກການປັບປຸງຂໍ້ມູນ.

### 3.4 ການສົມທົບທຶນແບບທຶນຮ່ວມ (ການສ້າງແຫຼ່ງທຶນການພັດທະນາເພື່ອອະນາຄົດ)

- ການນຳໃຊ້ວາລະປີ 2030 ເປັນສິ່ງຊຸກຍູ້ເພື່ອເສີມສ້າງການເຊື່ອມສານລະຫວ່າງງົບປະມານແຫ່ງຊາດ ແລະ ແຜນງານແຫ່ງຊາດ;
- ຮັບປະກັນຄວາມສອດຄ່ອງກັບການຮ່ວມມືກັບສາກົນເພື່ອການພັດທະນາ;
- ສ້າງຄວາມອາດສາມາດ ແລະ ສິ່ງເສີມພາກເອກະຊົນໃຫ້ມີສ່ວນຮ່ວມໃຫ້ຫຼາຍຂຶ້ນກ່ວາເກົ່າໃນວາລະການ ພັດທະນາແບບຍືນຍົງ;

- ພັດທະນາ ແລະ ປັບປຸງຍຸດທະສາດດ້ານການເງິນເພື່ອຈັດຕັ້ງປະຕິບັດ ປພຍ ໃຫ້ເຂົ້າກັບສະພາບຕົວຈິງຂອງປະເທດ, ຕາມຂໍ້ສະເໜີ ແລະ ແນະນຳ ໃນການປະເມີນຜົນການເງິນ ແລະ ການຊ່ວຍເຫຼືອເພື່ອການພັດທະນາ (DFAA) ຂອງ ສປປ ລາວ. DFAA ສະໜອງຫຼັກຖານ ແລະ ການວິເຄາະທີ່ເປັນປະໂຫຍດກ່ຽວກັບປະເພດ ແລະ ແຫຼ່ງທຶນໃນ ສປປ ລາວ, ເຊິ່ງຈະຊ່ວຍໃນການພັດທະນາຍຸດທະສາດ ແລະ ຊ່ວຍໃນການຕັດສິນໃຈກ່ຽວກັບປະເພດຂອງການສະໜອງແຫຼ່ງທຶນທີ່ເໝາະສົມໃນການລົງທຶນເພື່ອຈັດຕັ້ງປະຕິບັດ ປພຍ. ລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ ຈະຕ້ອງປະກອບສ່ວນໃນຮູບແບບການເງິນ ໃໝ່ ແລະ ນຳໃຊ້ບັນດາຂໍ້ມູນທາງການເງິນທີ່ມີຢູ່ຢ່າງມີປະສິດທິຜົນທີ່ສຸດ. ພ້ອມກັນນັ້ນ, ກໍຄວນເພີ່ມຄວາມໂປ່ງໃສດ້ານການເງິນ ແລະ ລາຍຮັບເພື່ອຮັບປະກັນການນຳໃຊ້ທຶນໃຫ້ເໝາະສົມ;
- ສ້າງແຜນຍຸດທະສາດການເງິນທີ່ມີປະສິດທິຜົນ ແລະ ພັດທະນາແຜນຍຸດທະສາດການເງິນແບບປະສົມປະສານສຳລັບ ສປປ ລາວ. ການຄຳນຶງເຖິງ ປະເພດແຫຼ່ງທຶນ ແລະ ປະລິມານຂອງທຶນທີ່ມີຢູ່ບໍ່ພຽງແຕ່ເປັນປັດໄຈໜຶ່ງທີ່ສຳຄັນເທົ່ານັ້ນ, ແຕ່ແນວທາງ ແລະ ວິທີການນຳໃຊ້ທຶນໃຫ້ເກີດມີປະສິດທິຜົນສູງສຸດເພື່ອບັນລຸເປົ້າໝາຍການພັດທະນາກໍຖືວ່າເປັນສິ່ງສຳຄັນເຊັ່ນດຽວກັນ. ການລະດົມທຶນຈາກແຫຼ່ງທຶນຈາກພາຍນອກ, ເຊັ່ນ: ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA), ການຮ່ວມມືໃຕ້-ໃຕ້ (South-South Cooperation) ແລະ ການສະໜອງທຶນໃນວຽກງານການປ່ຽນແປງດິນຟ້າອາກາດ ຄວນໄດ້ຮັບການນຳໃຊ້ໃຫ້ສອດຄ່ອງກັບເປົ້າໝາຍ. ການນຳໃຊ້ຂອບລາຍຈ່າຍ ແລະ ການເງິນ ຕ້ອງໄດ້ຮັບການປັບປຸງ ເພື່ອຮັບປະກັນການວາງແຜນຊັບພະຍາກອນໃຫ້ມີປະສິດທິພາບສູງສຸດ;
- ພິຈາລະນາການພັດທະນາຂອບການເງິນແບບປະສົມປະສານ ໂດຍອີງໃສ່ການປະເມີນຄວາມຕ້ອງການ ແລະ ຕົ້ນທຶນເພື່ອກຳນົດປະລິມານການລົງທຶນດ້ານສາທາລະນະທີ່ຕ້ອງການເພື່ອສາມາດບັນລຸ ປພຍ;
- ເພື່ອສາມາດບັນລຸ ປພຍ ໄດ້ໃນໄລຍະຍາວ, ການນຳໃຊ້ຂອບລາຍຈ່າຍດ້ານງົບປະມານ ຕ້ອງໄດ້ຮັບການປັບປຸງເພື່ອຮັບປະກັນການວາງແຜນດ້ານຊັບພະຍາກອນ, ເຊິ່ງມີຄວາມຈຳເປັນໃນການຫັນມານຳໃຊ້ງົບປະມານແຫ່ງຊາດເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ປພຍ, ເຊັ່ນ: ການພິຈາລະນາແຫຼ່ງທຶນທັງໝົດ, ເພີ່ມທະວີການມີສ່ວນຮ່ວມຂອງແຫຼ່ງທຶນພາຍໃນ ເຊິ່ງລວມເຖິງການປັບປຸງ ແລະ ການເອື້ອອຳນວຍສະພາບແວດລ້ອມໃຫ້ແກ່ຂະແໜງການເອກະຊົນ, ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງທາງດ້ານການເງິນຂອງພາກລັດ ແລະ ການປະຕິຮູບລະບົບການເກັບພາສີ ແລະ ການເກັບລາຍຮັບ, ການນຳໃຊ້ງົບປະມານທີ່ມີປະສິດທິຜົນ, ການສົ່ງເສີມການເຊື່ອມສານເພື່ອແກ້ໄຂບັນດາບັນຫາຕ່າງໆເຂົ້າໃນງົບປະມານ;
- ໃຫ້ບູລິມະສິດໃນການລະດົມແຫຼ່ງທຶນພາຍໃນປະເທດ, ລວມທັງລາຍຮັບຈາກການເກັບພາສີ, ເຊິ່ງຈະເປັນແຫຼ່ງທຶນທີ່ສຳຄັນສຳລັບແຜນ NSEDP ທີ່ຈະຕ້ອງຊອກຫາງົບປະມານເຖິງ 27 ຕື້ໂດລາສະຫະລັດ, ຄຽງຄູ່ກັບການຈັດຕັ້ງປະຕິບັດ ປພຍ ໃຫ້ມີຄວາມຄືບໜ້າຫຼາຍຂຶ້ນກ່ວາເກົ່າ. ພ້ອມກັນນັ້ນ, ການສ້າງສະພາບແວດລ້ອມເສດຖະກິດມະຫາພາກ ທີ່ມີສະຖຽນລະພາບ ແລະ ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງດ້ານການເງິນຂອງພາກລັດ, ຈຳເປັນຕ້ອງໄປຄຽງຄູ່ກັບການສ້າງງົບປະມານທີ່ໜ້າເຊື່ອຖືທີ່ສາມາດນຳໃຊ້ໄດ້ ຊຶ່ງຖືວ່າເປັນປັດໄຈຕົ້ນຕໍອັນສຳຄັນ;
- ສົ່ງເສີມໃຫ້ວຽກງານການລະດົມທຶນສຳລັບ ປພຍ/ NSEDP ເປັນສ່ວນໜຶ່ງຂອງຂະບວນການປຶກສາຫາລືຂອງຂະບວນການໂຕະມົນ, ເຊິ່ງນັບວ່າເປັນສິ່ງທີ່ສຳຄັນທີ່ຈຳເປັນຕ້ອງມີການເຊື່ອມສານ ແລະ ປຶກສາຫາລືລະຫວ່າງ ບັນດາຄູ່ຮ່ວມງານໃນການຮ່ວມມືຫຼາຍຝ່າຍໃນຫຼາຍຮູບແບບ ແລະ ການປຶກສາຫາລືກ່ຽວກັບ

ການຊອກຫຼາຍແຫຼ່ງທຶນທີ່ແຕກຕ່າງກັນ. ການທົບທວນຄືນຮູບພາບໂດຍລວມກ່ຽວກັບແຫຼ່ງທຶນ ແລະ ຄຸນລັກສະນະທີ່ແຕກຕ່າງກັນຂອງແຕ່ລະແຫຼ່ງທຶນ ຈະຊ່ວຍໃນການວາງແຜນຍຸດທະສາດການນໍາໃຊ້ທຶນຊ່ວຍເຫຼືອລ້າເພື່ອການພັດທະນາ ແລະ ການເງິນສາກົນລັກສະນະຕ່າງໆສາມາດສະໜອງທຶນທີ່ຍືນຍົງໄດ້ໃນໄລຍະຍາວ.

### 3.5 ການຮ່ວມມືທີ່ຫຼາຍຂຶ້ນ (ການປຶກສາຫາລື ແລະ ການຮ່ວມມືຫຼາຍຝ່າຍ)

- ໃຫ້ບູລິມະສິດແກ່ການວາງມາດຕະການທີ່ມີຄວາມຮັບປະກັນດ້ານຄວາມສະຖຽນລະພາບຂອງເສດຖະກິດມະຫາພາກ, ຊຶ່ງແຜນ NSEDP ເຫັນວ່າຍັງຂາດແຫຼ່ງທຶນບາງສ່ວນໃນການຈັດຕັ້ງປະຕິບັດ ໂດຍຄາດວ່າການລົງທຶນ ແລະ ເງິນກູ້ຢືມຈະຊ່ວຍສະໜັບສະໜູນໃນສ່ວນນັ້ນໄດ້. ສິ່ງດັ່ງກ່າວສາມາດເກີດຂຶ້ນໄດ້ກໍຕໍ່ເມື່ອ ສປປ ລາວ ມີຄວາມໝັ້ນຄົງດ້ານເສດຖະກິດມະຫາພາກ ແລະ ຮັບປະກັນການສ້າງສະພາບແວດລ້ອມທີ່ເອື້ອອໍານວຍເພື່ອການລົງທຶນ;
- ການປັບປຸງສະພາບແວດລ້ອມການດໍາເນີນທຸລະກິດແມ່ນຕ້ອງສອດຄ່ອງກັບແນວທາງຂອງ ອົງການການຄ້າໂລກ ແລະ ປະຊາຄົມເສດຖະກິດອາຊຽນ;
- ສົ່ງເສີມການມີສ່ວນຮ່ວມຂອງຂະແໜງການເອກະຊົນ, ປັບປຸງສະພາບແວດລ້ອມໃນການດໍາເນີນທຸລະກິດຕ້ອງອີງໃສ່ກົດລະບຽບ ຫຼື ກົດໝາຍ ແລະ ພັນທະທີ່ມີຕໍ່ສາກົນ, ເຊິ່ງຄວາມໝັ້ນຄົງຂອງ ສປປ ລາວ ຈະເປັນປັດໄຈໜຶ່ງທີ່ສໍາຄັນເພື່ອດຶງດູດການລົງທຶນ;
- ປັບປຸງມາດຕະການທາງການຕະຫຼາດເພື່ອໃຫ້ ສປປ ລາວ ກາຍເປັນສະຖານທີ່ສໍາລັບການລົງທຶນ ແລະ ເພື່ອຊອກຫາ ແລະ ລະດົມບັນດານັກລົງທຶນຈາກຕ່າງປະເທດ ໃຫ້ເຂົ້າມາລົງທຶນຢູ່ ສປປ ລາວ, ຄຽງຄູ່ກັບການສ້າງເຂດເສດຖະກິດພິເສດ ໃຫ້ກາຍມາເປັນຈຸດເຊື່ອມໂຍງເພື່ອເຂົ້າເຖິງແຫຼ່ງຕະຫຼາດອາຊຽນ. ສະພາການຄ້າ ແລະ ອຸດສາຫະກໍາ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ ຄວນຮ່ວມມືກັນໃນການເຄື່ອນໄຫວໂຄສະນາ ກ່ຽວກັບ ຕະຫຼາດການລົງທຶນຢູ່ ສປປ ລາວ ເພື່ອສ້າງທ່າແຮງໃນການດຶງດູດນັກລົງທຶນໃຫ້ນັບມື້ນັບຫຼາຍຂຶ້ນ;
- ເຊື່ອມໂຍງຂະບວນການໂຕະມົນ ແລະ ຄະນະກໍາມະທິການເຮັດວຽກງານດ້ານການຄ້າເຂົ້າກັບເວທີສໍາມະນາທຸລະກິດລາວ;
- ເສີມສ້າງຄວາມຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດ ປພຍ ໃຫ້ແກ່ທຸກຂັ້ນ ນັບແຕ່ສູນກາງຮອດທ້ອງຖິ່ນ, ແລະ ຮັບປະກັນການລວມສູນໃນຂັ້ນເມືອງ ແລະ ບ້ານດຽວກັນ ໂດຍການປະສານງານຕາມລະບົບສາຍຕັ້ງ ແລະ ສາຍຂວາງ. ສ້າງຂີດຄວາມອາດສາມາດໃຫ້ແກ່ຂັ້ນແຂວງ, ເມືອງ ແລະ ບ້ານເພື່ອໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດ ປພຍ, ລວມທັງການມີສ່ວນຮ່ວມຂອງປະຊາຊົນລາວ ແລະ ອົງການຈັດຕັ້ງທາງສັງຄົມ ຈະຊ່ວຍຮັບປະກັນວ່າ ພວກເຮົາຈະພ້ອມກັນກ້າວໄປເພື່ອການພັດທະນາທີ່ຍືນຍົງ;
- ສົ່ງເສີມການມີສ່ວນຮ່ວມຂອງທຸກພາກສ່ວນຂອງສັງຄົມ, ໂດຍສະເພາະໃນລະດັບບ້ານ ແລະ ໃຫ້ປະຊາຊົນມີສ່ວນຮ່ວມໃນຂະບວນການເຄື່ອນໄຫວ ປພຍ ຢ່າງຫ້າວຫັນ. ປະຊາຊົນທຸກຄົນຈໍາເປັນຕ້ອງມີສ່ວນຮ່ວມແບບເປັນຄູ່ຮ່ວມງານ, ແທນທີ່ຈະເຮັດແທນປະຊາຊົນ ຫຼື ເຮັດເພື່ອປະຊາຊົນເອງ, ການພັດທະນາຈໍາເປັນຕ້ອງມີການມີສ່ວນຮ່ວມຂອງປະຊາຊົນໃນທຸກຂັ້ນຕອນ, ເພາະປະຊາຊົນລາວແມ່ນມີຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມຕ້ອງການທີ່ຊັດເຈນໃນແຕ່ລະທ້ອງຖິ່ນ, ພ້ອມທັງມີຄວາມຮູ້ ແລະ ມີຊັບພະຍາກອນ

ໃນທ້ອງຖິ່ນທີ່ຈະສາມາດສາມາດຊ່ວຍບັນລຸ ປພຍ ແລະ ສາມາດຊ່ວຍຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ປພຍ ໄດ້ອີກດ້ວຍ;

- ສືບຕໍ່ການມີສ່ວນຮ່ວມຂອງອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ເຂົ້າຮ່ວມໃນການປຶກສາຫາລື ແລະ ການຈັດຕັ້ງສະຖາບັນເພື່ອຈັດຕັ້ງການປະຕິບັດ ແລະ ຕິດຕາມ ປພຍ.

### 3.6 ການເຜີຍແຜ່ ແລະ ການປູກຈິດສຳນຶກ

- ຄຽງຄູ່ກັບການສ້າງແຜນປະຕິບັດງານແຫ່ງຊາດ ເພື່ອການຈັດຕັ້ງປະຕິບັດ ປພຍ, ແຜນດຳເນີນງານສື່ສານ, ໂຄສະນາ ແລະ ເຜີຍແຜ່ ເພື່ອການຈັດຕັ້ງປະຕິບັດ ປພຍ ແມ່ນມີຄວາມສຳຄັນ ເພື່ອຮັບປະກັນການສະໜັບສະໜູນຂອງທຸກຂະແໜງການ ແລະ ເພີ່ມທະວີການຮ່ວມມືທີ່ຫຼາຍຂຶ້ນ, ເຊິ່ງເປັນສິ່ງຈຳເປັນສຳລັບການປະຕິບັດງານ ປພຍ ໃຫ້ເປັນຮູບປະທຳ. ດັ່ງນັ້ນ, ການສົ່ງເສີມການຮັບຮູ້ທົ່ວໄປກ່ຽວກັບຂອງວາລະປີ 2030 ແລະ ບັນດາບູລິມະສິດຂອງຊາດ ບໍ່ພຽງແຕ່ສ້າງຈິດສຳນຶກ ແລະ ຄຳໝາຍໝັ້ນຢູ່ໃນລະດັບຊາດເທົ່ານັ້ນ ແຕ່ຕ້ອງລວມທັງລະດັບທ້ອງຖິ່ນອີກດ້ວຍ. ໂດຍສະເພາະແມ່ນການສົ່ງເສີມ ແລະ ເຊື່ອມສານແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ວາລະ 2030 ຢູ່ ສປປ ລາວ ໃຫ້ຄຽງຄູ່ກັບແຜນພັດທະນາແຫ່ງຊາດ.

# ພາກ ຂ.

# ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ວາລະ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ



## 1. ພາກສະເໜີຈຸດປະສົງ ແລະ ວິໄສທັດ ຂອງແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ວາລະ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ

### 1.1 ຈຸດປະສົງ:

ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ (ຊື່ຫຍໍ້: ແຜນດຳເນີນງານການສື່ສານ ປພຍ ຫຼື SDG Communication and Advocacy Work Plan) ສ້າງຂຶ້ນເພື່ອຊ່ວຍກອງເລຂາຄະນະຊີ້ນຳລະດັບຊາດ, ບັນດາຄະນະຈຸດປະສານງານ ປພຍ ແຫ່ງຊາດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ປພຍ ຢູ່ພາຍໃນປະເທດ, ໂດຍມີ ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ ແລະ ສູນສະຖິຕິແຫ່ງຊາດ ປະກອບເປັນກອງເລຂາໃນການປະສານງານຫຼັກ. ບັນດາເປົ້າໝາຍ ແລະ ຄາດໝາຍທີ່ກຳນົດຢູ່ໃນແຜນດຳເນີນງານນີ້ແມ່ນຖືກພັດທະນາຂຶ້ນບົນພື້ນຖານແນວທາງຕໍ່ໜ້າໃນ ພາກ D ຂອງບົດລາຍງານແຫ່ງຊາດແບບສະໝັກໃຈ (VNR) ຂອງ ສປປ ລາວສະບັບທຳອິດໃນປີ 2018.

ບົດລາຍງານແຫ່ງຊາດແບບສະໝັກໃຈ (VNR) ສະບັບທຳອິດນີ້ ໄດ້ສະແດງໃຫ້ເຫັນເຖິງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ ຂອງທຸກພາກສ່ວນທີ່ມີຄວາມຈຳເປັນຕ້ອງມີການປະກອບສ່ວນຢ່າງຮອບດ້ານ, ໂດຍສະເພາະໃນລະດັບທ້ອງຖິ່ນ, ເຊິ່ງເປັນສິ່ງທ້າທາຍໜຶ່ງທີ່ມີຄວາມສຳຄັນ ແລະ ຈຳເປັນຕ້ອງແກ້ໄຂ, ເນື່ອງຈາກວ່າການສື່ສານໂດຍສະເພາະແມ່ນການສ້າງຄວາມຮັບຮູ້ ແລະ ການປູກຈິດສຳນຶກໃຫ້ກັບສັງຄົມ ແມ່ນຂັ້ນຕອນທຳອິດໃນການສົ່ງເສີມການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງ.

ດັ່ງນັ້ນ, ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ວາລະປີ 2030 ເພື່ອການພັດທະນາແບບຍືນຍົງ ຢູ່ ສປປ ລາວ ຈຶ່ງຖືກຮ່າງຂຶ້ນໂດຍ ກອງເລຂາ ປພຍ ແຫ່ງຊາດ ແລະ ມີໜ້າທີ່ພາລະບົດບາດຕົ້ນຕໍໃນການນຳພາການຈັດຕັ້ງປະຕິບັດກິດຈະກຳຕ່າງໆ, ໂດຍການມີສ່ວນຮ່ວມຂອງກະຊວງ, ຂະແໜງການທີ່ກ່ຽວຂ້ອງ, ບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນຕ່າງໆ, ລວມທັງອົງການຈັດຕັ້ງທາງສັງຄົມ, ອົງການທີ່ບໍ່ສັງກັດລັດຖະບານ, ພາກເອກະຊົນ, ສະຖາບັນການສຶກສາ ແລະ ອື່ນໆ ເພື່ອຮັບຮູ້ວິໄສທັດປີ 2030 ຂອງ ສປປ ລາວ ເຮົາ ດຽງຄູ່ກັບເປົ້າໝາຍສາກົນ.

ແຜນປະຕິບັດງານນີ້ ມີຂໍ້ສົມມຸດຖານທີ່ສຳຄັນດັ່ງຕໍ່ໄປນີ້:

- ພາກສ່ວນກ່ຽວຂ້ອງມີຄວາມສົນໃຈທີ່ຈະເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ປພຍ;
- ການຮ່ວມມືກັບສື່ມວນຊົນຂອງລັດຖະບານ ແລະ ເອກະຊົນ ແມ່ນເປັນໄປໄດ້ໃນຫຼາຍຊ່ອງທາງ;
- ມີທຶນພຽງພໍເພື່ອຈັດຕັ້ງປະຕິບັດກິດຈະກຳການສື່ສານ, ໂຄສະນາ ແລະ ເຜີຍແຜ່ຕ່າງໆ.

ແຜນດຳເນີນການນີ້ສະໜັບສະໜູນໃຫ້ແກ່ວິໄສທັດ ແລະ ພາລະກິດຂອງກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ໃນການກຳນົດຈຸດປະສົງຂອງແຜນຍຸດທະສາດ, ລວມທັງພາລະບົດບາດ ໜ້າທີຮັບຜິດຊອບ ແລະ ກຸ່ມເປົ້າໝາຍ, ອະທິບາຍພາລະບົດບາດຂອງ ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ທີ່ກ່ຽວຂ້ອງກັບການສື່ສານ, ຂອບການໂຄສະນາ ແລະ ເຜີຍແຜ່. ແຜນດຳເນີນງານຈະພິຈາລະນາເອົາບັນດາຈຸດແຂງ, ຈຸດອ່ອນ, ກາລະໂອກາດ ແລະ ບັນດາສິ່ງທ້າທາຍ (SWOT) ກ່ຽວກັບສະພາບແວດລ້ອມໃນການດຳເນີນງານໃນ ສປປ ລາວ ດັ່ງນີ້:

- **<u>ຈຸດດີ (Strength)</u>**
  - ມີການແຕ່ງຕັ້ງ ຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ຂອງ ສປປ ລາວ ໂດຍການເປັນປະທານຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ;
  - ມີການແບ່ງຄວາມຮັບຜິດຊອບຂອງແຕ່ລະເປົ້າໝາຍໃຫ້ບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງຢ່າງຊັດເຈນ ແລະ ການສ້າງຈຸດປະສານງານພາຍໃນຂອງແຕ່ລະກະຊວງໃນການປະສານງານ;
  - ມີລາຍລະອຽດທີ່ຊັດເຈນກ່ຽວກັບພາລະບົດບາດ, ໜ້າທີ່ ແລະ ການແບ່ງຄວາມຮັບຜິດຊອບຂອງກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ແລະ ຈຸດປະສານງານ ປພຍ ໃນບັນດາກະຊວງທີ່ກ່ຽວຂ້ອງ, ອົງການລັດທຽບເທົ່າກະຊວງ ແລະ ອົງການຈັດຕັ້ງມະຫາຊົນ;
  - ມີການກຳນົດຕົວຊີ້ບອກທີ່ຕິດພັນກັບແຕ່ລະຂະແໜງການຢ່າງຊັດເຈນ;
  - ແຜນຍຸດທະສາດນີ້ແມ່ນຖອດຖອນບົດຮຽນຈາກການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດເພື່ອການພັດທະນາ (MDGs);
  - ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ເຄີຍເປັນກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດເພື່ອການພັດທະນາ, ສະນັ້ນ, ກອງເລຂາ ປພຍ ຈຶ່ງມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຄວາມຕ້ອງການ ແລະ ປັດໄຈສຳຄັນທີ່ສົ່ງຜົນຕໍ່ຄວາມສຳເລັດຂອງວາລະການພັດທະນາ;
  - ມີເວທີເຜີຍແຜ່ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ປພຍ ໃນຫຼາຍລະດັບ, ເຊັ່ນ: ກອງປະຊຸມຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ, ກອງປະຊຸມໂຕະມົນ, ກອງປະຊຸມລັດຖະບານ, ກອງປະຊຸມສະພາ ແລະ ການເຜີຍແຜ່ຜ່ານສື່ອອນລາຍຕ່າງໆ;
  - ມີການສະໜັບສະໜູນຈາກຄູ່ຮ່ວມພັດທະນາ ເຊັ່ນ: ອົງການເຄືອຂ່າຍສະຫະປະຊາຊາດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນອື່ນໆ ໃນການຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ;
  - ມີທີມງານທີ່ປຶກສາຈາກ ອົງການ ສປຊ (UNCT – United Nations Country Team) ປະຈຳລາວ ເຂົ້າມາຊ່ວຍດ້ານວິຊາການໃຫ້ແກ່ກອງເລຂາ ປພຍ ແລະ ການຮ່າງແຜນດຳເນີນງານສະບັບນີ້.

- **<u>ຂໍ້ຄົງຄ້າງ (Weakness)</u>**
  - ຄວາມອາດສາມາດໃນການສື່ສານ, ໂຄສະນາ ແລະ ເຜີຍແຜ່ວາລະປີ 2030 ຂອງບຸກຄະລາກອນ ຍັງຕ້ອງໄດ້ຮັບການປັບປຸງ ເພາະວ່າເປັນແນວຄວາມຄິດໃໝ່ ແລະ ຕ້ອງໄດ້ມີການພັດທະນາຢ່າງຕໍ່ເນື່ອງ;
  - ການນຳໃຊ້ແຫຼ່ງທຶນ ແລະ ຊັບພະຍາກອນຍັງມີຂໍ້ຈຳກັດ ເຊິ່ງອາດເປັນຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດແຜນດັ່ງກ່າວ;
  - ການໂຄສະນາ ແລະ ເຜີຍແຜ່ ໃຫ້ເຂົ້າເຖິງປະຊາຊົນຍັງມີຄວາມຫຍຸ້ງຍາກ ໂດຍສະເພາະປະຊາຊົນທີ່ອາໄສຢູ່ເຂດພູສູງ ແລະ ເຂດຫ່າງໄກສອກຫຼີກ;
  - ການເຂົ້າເຖິງກຸ່ມຊົນເຜົ່າທີ່ແຕກຕ່າງກັນ ອາດຈະຕ້ອງນຳໃຊ້ພາສາທ້ອງຖິ່ນ ຫຼື ພາສາຊົນເຜົ່າ ໃນການສື່ສານເພື່ອສາມາດເຂົ້າເຖິງໄດ້ທຸກກຸ່ມຄົນ;
  - ການປະດິດສ້າງ ແລະ ຄວາມຄິດສ້າງສັນໃນການອອກແບບເນື້ອຫາການສື່ສານເປັນສິ່ງທ້າທາຍໃນຫຼາຍດ້ານເຊັ່ນ: ແຜນງານ, ການພັດທະນາເນື້ອຫາ ແລະ ການເຊື່ອມໂຍງເນື້ອຫາເຊິ່ງກັນ ແລະ ກັນ.

➢ **<u>ກາລະໂອກາດ (Opportunity)</u>**

- ການຈັດຕັ້ງປະຕິບັດ ປພຍ ແມ່ນຄຽງຄູ່ກັບການຈັດຕັ້ງປະຕິບັດ ແລະ ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
- ການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ, INGOs, CSOs, ແລະ ພາກເອກະຊົນ ໃນການຈັດຕັ້ງປະຕິບັດ ປພຍ ຂອງ ສປປ ລາວ ແລະ ການນຳໃຊ້ແຜນດຳເນີນງານ ເພື່ອການເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄວາມໝາຍ, ຄວາມສຳຄັນຂອງການຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ, ໂດຍສະເພາະຂັ້ນທ້ອງຖິ່ນ ແລະ ເຂດຫ່າງໄກສອກຫລີກ;
- ມີການຮ່ວມມືກັບສື່ມວນຊົນ ແລະ ສື່ອອນລາຍໃນຫຼາຍຊ່ອງທາງ ເພື່ອເຜີຍແຜ່ການຈັດຕັ້ງປະຕິບັດ ປພຍ ຢູ່ ສປປ ລາວ;
- ຄູ່ຮ່ວມງານສາມາດນຳເອົາແຜນຍຸດທະສາດ ທີ່ຈັດຕັ້ງປະຕິບັດຢູ່ປະເທດອື່ນໆ ເພື່ອນຳມາແລກປ່ຽນບົດຮຽນກັບ ສປປ ລາວ;
- ຫຼາຍແຫຼ່ງຂ່າວ ແລະ ເວທີສື່ມວນຊົນແມ່ນສ້າງຂຶ້ນດ້ວຍຕົວເອງ. ດັ່ງນັ້ນ, ການຮ່ວມມືກັບພວກເຂົາເພື່ອສົ່ງເສີມກິດຈະກຳການສື່ສານ ປພຍ ສາມາດນຳໄປສູ່ຜົນປະໂຫຍດຂອງທັງສອງຝ່າຍໄດ້.

➢ **<u>ສິ່ງທ້າທາຍ (Challenges)</u>**

- ບາງຄຳສັບທີ່ມີຢູ່ໃນພາສາອັງກິດອາດຈະບໍ່ສາມາດແປເປັນພາສາລາວ ເພື່ອຈັບຄວາມໝາຍໃຈຄວາມທັງໝົດຂອງຄຳດັ່ງກ່າວໄດ້;
- ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນມີເນື້ອຫາກວ້າງຂວາງ, ກວມລວມ ແລະ ມີເປົ້າໝາຍໄລຍະຍາວ. ສະນັ້ນ, ມັນເປັນສິ່ງທ້າທາຍທີ່ຈະສາມາດອະທິບາຍໃຫ້ເຂົ້າໃຈດ້ວຍຂໍ້ຄວາມທີ່ສັ້ນກະທັດຮັດ;
- ອົງປະກອບຂອງກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ແລະ ຈຸດປະສານງານຜູ້ທີ່ຈະຊ່ວຍຂະຫຍາຍແຜນດຳເນີນງານນີ້ ອາດຈະມີການປ່ຽນແປງ ຫຼື ສັບປ່ຽນ, ເນື່ອງຈາກມີການແຕ່ງຕັ້ງໜ່ວຍງານໃໝ່ ຫຼື ມີການເຄື່ອນຍ້າຍພະນັກງານ. ດັ່ງນັ້ນ, ການມອບວຽກ ແລະ ຮັບວຽກຂອງທີມງານໃໝ່ອາດຈະສ້າງຄວາມຫຍຸ້ງຍາກ ແລະ ລ້າຊ້າໃຫ້ແກ່ການຈັດຕັ້ງປະຕິບັດ ປພຍ ໃນແຕ່ລະໄລຍະ;
- ແຜນງານການຕິດຕາມກວດກາ ແລະ ປະເມີນຜົນສຳລັບແຜນດຳເນີນງານ ອາດມີຄວາມຫຍຸ້ງຍາກໃນການປະເມີນ ແລະ ການວິໄຈຂໍ້ມູນໃຫ້ໄດ້ຄຸນນະພາບ;
- ການເຂົ້າຫາແຫຼ່ງທຶນເພື່ອຈັດຕັ້ງປະຕິບັດ ປພຍ ຍັງມີຈຳກັດ, ພົບຂໍ້ຫຍຸ້ງຍາກ ແລະ ບໍ່ຍືນຍົງ.

**ເພື່ອໃຫ້ການຈັດຕັ້ງປະຕິບັດແຜນດຳເນີນງານ ມີຄວາມສົມບູນຄົບຖ້ວນ ຈຶ່ງໄດ້ກຳນົດ 4 ສົມມຸດຖານທີ່ສຳຄັນດັ່ງນີ້:**

- ແຜນດຳເນີນງານດັ່ງກ່າວຈະຕ້ອງມີຂອບວຽກ, ຂະບວນການຈັດຕັ້ງປະຕິບັດ ແລະ ແຜນດຳເນີນງານຢ່າງລະອຽດໃຫ້ກອງເລຂາ ປພຍ ໃນການຈັດຕັ້ງປະຕິບັດແຜນດຳເນີນງານການສື່ສານ ແລະ ກິດຈະກຳຕ່າງໆ;
- ກົນໄກການປະເມີນ ແລະ ສະໜັບສະໜູນ ໃຫ້ແກ່ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ພ້ອມທັງຄວາມອາດສາມາດດ້ານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ອາດຫຼຸດໜ້ອຍຖອຍລົງ, ຈຶ່ງຕ້ອງໄດ້ມີການຍົກລະດັບຄວາມອາດສາມາດຂອງບຸກຄະລາກອນ ແລະ ການສະໜັບສະໜູນດ້ານການເງິນ;

- ຄຽງຄູ່ກັບການຈັດຕັ້ງປະຕິບັດແຜນດັ່ງກ່າວ, ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ຈະຊຸກຍູ້ການຈັດຕັ້ງປະຕິບັດ, ການປະສານງານກັບບັນດາກະຊວງ, ຂະແໜງການ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງບັນດາສື່ມວນຊົນຈາກພາກລັດ ແລະ ເອກະຊົນ;
- ແຜນດຳເນີນງານຈະຊ່ວຍສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ, ພ້ອມນັ້ນຍັງສົ່ງເສີມຄວາມອາດສາມາດໃນການເຮັດວຽກຮ່ວມກັນຢ່າງມີປະສິດທິພາບ, ມີເນື້ອໃນສອດຄ່ອງກົມກຽວ ແລະ ກໍ່ໃຫ້ເກີດຜົນໄດ້ຮັບທີ່ສ້າງສັນ.

### 1.2 ວິໄສທັດກ່ຽວກັບ ເປົ້າໝາຍການພັດທະນາແບບຍືນຍົງຢູ່ ສປປ ລາວ:

ກິດຈະກຳການສື່ສານ, ໂຄສະນາ ແລະ ເຜີຍແຜ່ ທັງໝົດຄວນຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບວິໄສທັດຂອງ ປພຍ ຢູ່ ສປປ ລາວ ດັ່ງທີ່ໄດ້ກຳນົດໄວ້ໂດຍ ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ດັ່ງນີ້:

*"ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງໂດຍຄຳນຶງເຖິງການຈັດຕັ້ງປະຕິບັດທີ່ກວມລວມ, ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ແລະ ຄວາມໂປ່ງໃສ ພາຍໃນປີ 2030"*

## 2. ບັນດາເປົ້າໝາຍ

ແຜນດຳເນີນງານດັ່ງກ່າວສະໜອງພື້ນຖານໃຫ້ແກ່ ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ເພື່ອສົ່ງເສີມແຜນພັດທະນາການສື່ສານເປົ້າໝາຍການພັດທະນາແບບຍືນຍົງ ແລະ ກິດຈະກຳຕ່າງໆດ້ວຍ 4 ຈຸດປະສົງ ດັ່ງຕໍ່ໄປນີ້:

- ເພື່ອເຊື່ອມໂຍງ ປພຍ ເຂົ້າໃນຫຼັກສູດການສຶກສາແຫ່ງຊາດ ຄຽງຄູ່ກັບການສ້າງອຸປະກອນການສຶກສາ ແລະ ບົດຮຽນທີ່ເໝາະສົມໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ;
- ເພື່ອປູກຈິດສຳນຶກຄວາມຮັບຮູ້ໃນສັງຄົມກ່ຽວກັບ ປພຍ ໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງເພື່ອໃຫ້ສອດຄ່ອງກັບຫຼັກການ "*ພວກເຮົາພ້ອມກັນກ້າວໄປ";*
- ເພື່ອສ້າງເວທີໃນການຊຸກຍູ້ການປະກອບສ່ວນຂອງປະຊາຊົນເຂົ້າໃນຂະບວນການຈັດຕັ້ງປະຕິບັດ ປພຍ ຕາມວາລະ 2030 ເພື່ອການພັດທະນາແບບຍືນຍົງ;
- ເພື່ອຕິດຕາມ ແລະ ປະເມີນຜົນປະສິດທິພາບຂອງແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່.

## 3. ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ

ເພື່ອຮັບປະກັນຄວາມສອດຄ່ອງຂອງການຈັດຕັ້ງປະຕິບັດເປົ້າໝາຍຂອງແຜນດຳເນີນງານ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງບັນດາຂະແໜງການກ່ຽວຂ້ອງຈະຖືກກຳນົດໄວ້ດັ່ງນີ້:

*ພາຍໃນ/ລັດຖະບານ*

- ພາຍໃຕ້ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ເພື່ອການຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງຢູ່ ສປປ ລາວ, ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ, ທັງສູນກາງ ແລະ ທ້ອງຖິ່ນ, ແມ່ນມີເປົ້າໝາຍດຽວກັນ, ເຊິ່ງແຕ່ລະພາກສ່ວນຕ້ອງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ພາຍໃນຂອບເຂດໜ້າວຽກຂອງຕົນ ເພື່ອໃຫ້ເຂົ້າເຖິງປະຊາຊົນບັນດາເຜົ່າ ພາຍໃນເຂດຊຸມຊົນ ແລະ ທ້ອງຖິ່ນ;
- ການເຜີຍແຜ່ຂໍ້ມູນຂ່າວສານຈາກກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ໃຫ້ແກ່ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຄວນຈະທັນກັບເວລາ ແລະ ຖືກຕ້ອງ, ການແລກປ່ຽນຂໍ້ມູນລະຫວ່າງບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງນັ້ນ ຕ້ອງດຳເນີນຢ່າງເປັນປົກກະຕິ ເຊິ່ງມີຄວາມສຳຄັນຕໍ່ການບັນລຸຜົນສຳເລັດຂອງແຜນດຳເນີນງານນີ້;
- ການເຮັດວຽກຮ່ວມກັນແມ່ນພື້ນຖານທີ່ສຳຄັນໃນການບັນລຸເປົ້າໝາຍ ແລະ ບັນດາກິດຈະກຳຂອງແຜນວຽກການສື່ສານພາຍໃຕ້ແຜນດຳເນີນງານນີ້;
- ເປົ້າໝາຍການພັດທະນາແບບຍືນຍົງ ແມ່ນຄຳໝັ້ນສັນຍາລະດັບຊາດ ແລະ ບໍ່ແມ່ນໜ້າທີ່ສະເພາະຂອງລັດຖະບານ ຫຼື ປະເທດໃດໜຶ່ງເທົ່ານັ້ນ.

*ພາຍນອກ/ຄູ່ຮ່ວມພັດທະນາ*

- ແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງຢູ່ ສປປ ລາວ ສະໜອງກາລະໂອກາດສຳລັບຄູ່ຮ່ວມພັດທະນາ ເພື່ອນຳໃຊ້ທຶນຂອງຜູ້ໃຫ້ທຶນໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ;
- ຄູ່ຮ່ວມພັດທະນາມີທ່າແຮງທີ່ຈະສະໜັບສະໜູນແຜນດຳເນີນງານນີ້ ເນື່ອງຈາກຄູ່ຮ່ວມພັດທະນາມີຄວາມອາດສາມາດໃນການລະດົມຂົນຂວາຍ, ທັງມີປະສົບການລະດັບສາກົນ ແລະ ຄວາມຮັບຮູ້ ແລະ ຄວາມສາມາດດ້ານວິຊາການທີ່ ສປປ ລາວ ສາມາດຫັນມານຳໃຊ້ໃຫ້ແທດເໝາະກັບສະພາບການພັດທະນາຂອງປະເທດ;
- ການເຮັດວຽກຮ່ວມກັບຄູ່ຮ່ວມພັດທະນາຈະຮັບປະກັນຜົນໄດ້ຮັບຂອງກິດຈະກຳທີ່ສຳຄັນຂອງແຜນດຳເນີນງານທີ່ດີກ່ວາ ແລະ ສາມາດຄວບຄຸມໄດ້ຫຼາຍກ່ວາ;
- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ແມ່ນມຸ່ງໝັ້ນທີ່ຈະເຮັດວຽກຮ່ວມກັບຄູ່ຮ່ວມພັດທະນາທີ່ໜ້າເຊື່ອຖື ແລະ ໄວ້ວາງໃຈໄດ້ ເພື່ອຊ່ວຍໃຫ້ປະເທດລາວຮັບຮູ້ ປພຍ ແລະ ວາລະ 2030 ເພື່ອການພັດທະນາແບບຍືນຍົງ.

*ພາຍນອກ/ສັງຄົມ*

- ແຜນດຳເນີນງານດັ່ງກ່າວຈະຮັບປະກັນຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມກ່ຽວກັບເນື້ອໃນຈິດໃຈຂອງ ປພຍ ພ້ອມທັງຜົນປະໂຫຍດສູງສຸດຂອງຂະບວນການຈັດຕັ້ງປະຕິບັດ ປພຍ ໃນອານະຄົດ;
- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ໃຫ້ຄວາມສຳຄັນຕໍ່ກັບຄຳຄິດເຫັນ ແລະ ຂໍ້ມູນຂ່າວສານທີ່ໄດ້ຮັບຈາກສັງຄົມ, ແລະ ເຄົາລົບຕໍ່ກັບຄວາມຄິດເຫັນທີ່ຫຼາກຫຼາຍ;

- ຄວາມສົນໃຈ ແລະ ການເປັນຢູ່ທີ່ດີຂອງສັງຄົມ ແມ່ນມີຄວາມສຳຄັນຕໍ່ການຈັດຕັ້ງປະຕິບັດແຜນງານວາລະ 2030 ເພື່ອການພັດທະນາແບບຍືນຍົງ.

*ພາຍນອກ/ເອກະຊົນ*

- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ຖືກມອບໝາຍໃຫ້ສ້າງຂີດຄວາມອາດສາມາດ ແລະ ຄວາມຍືນຍົງຂອງຊາດ, ພ້ອມທັງຊ່ວຍເຫຼືອພາກເອກະຊົນໃນການເສີມຂະຫຍາຍຄວາມຮັບຮູ້ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ;
- ແຜນດຳເນີນງານຍັງຮຽກຮ້ອງໃຫ້ພາກສ່ວນເອກະຊົນເຂົ້າມາເປັນສ່ວນຫນຶ່ງຂອງຂະບວນການ ປພຍ ໃນດ້ານການສະໜອງທຶນ ແລະ ການຈັດຕັ້ງປະຕິບັດ ເພື່ອຮັບປະກັນຜົນປະໂຫຍດເຊິ່ງກັນ ແລະ ກັນ, ເຊິ່ງຈະເປັນສິ່ງດຶງດູດຄວາມສົນໃຈໃນການດຳເນີນທຸລະກິດຂອງພາກເອກະຊົນໄດ້ໃນທາງບວກ ແລະ ມີຄວາມຍືນຍົງ;
- ແຜນດຳເນີນງານສະທ້ອນໃຫ້ເຫັນເຖິງຄວາມສຳຄັນຂອງພາກເອກະຊົນຕໍ່ກັບ ປພຍ ເພາະວ່າພາກເອກະຊົນເປັນພາກສ່ວນທີ່ກວມເອົາແຮງງານສ່ວນໃຫຍ່ຢູ່ ສປປ ລາວ;
- ແຜນດຳເນີນງານນີ້ຮຽກຮ້ອງໃຫ້ພາກເອກະຊົນມີສ່ວນຮ່ວມໃນການຊຸກຍູ້ ແລະ ສົ່ງເສີມ ປພຍ ໃນລະດັບທ້ອງຖິ່ນ.

*ພາຍນອກ/ສື່ມວນຊົນ*

- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ໃຫ້ຄວາມເຄົາລົບ ແລະ ຮັບຮູ້ວ່າບັນດາຊ່ອງທາງສື່ມວນຊົນ ຈາກຄູ່ຮ່ວມງານພາກລັດ ແລະ ເອກະຊົນ ແມ່ນສ່ວນໜຶ່ງທີ່ເຮັດໃຫ້ບັນດາກິດຈະກຳໃນແຜນການເຮັດວຽກມີຄວາມສຳເລັດ;
- ແຜນດຳເນີນງານແມ່ນເນັ້ນໃຫ້ເຫັນເຖິງບົດບາດຄວາມສຳຄັນຂອງສື່ມວນຊົນໃນການເຜີຍແຜ່ຂໍ້ມູນຂ່າວສານທີ່ເປັນປະໂຫຍດ ແລະ ໜ້າເຊື່ອຖືທີ່ກ່ຽວຂ້ອງກັບ ປພຍ ໃຫ້ກັບທຸກໆພາກສ່ວນທີ່ກ່ຽວຂ້ອງ;
- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ເຫັນເຖິງຄວາມສຳຄັນຂອງບົດບາດຂອງສື່ມວນຊົນຕ່າງໆ ລວມທັງແນວຄວາມຄິດໃໝ່ ແລະ ສ້າງສັນໃນການຊ່ວຍເຜີຍແຜ່ຂໍ້ມູນຂ່າວສານໃຫ້ແກ່ປະຊາຊົນບັນດາເຜົ່າທຸກທົ່ວໜ້າ, ລວມທັງກຸ່ມຊົນເຜົ່າທີ່ຢູ່ໃນເຂດຫ່າງໄກສອກຫລີກ ແລະ ເຂດພູດອຍ, ໂດຍສະເພາະການປັບເນື້ອຫາເພື່ອໃຫ້ປະຊາຊົນເຂົ້າໃຈງ່າຍຂຶ້ນ.

*ພາຍນອກ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ*

- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ຮັບຮູ້ວ່າອົງການ INGOs ແລະ CSOs ເປັນຄູ່ຮ່ວມງານໜຶ່ງທີ່ສຳຄັນ ແລະ ມີຄວາມໜ້າເຊື່ອຖືໃນການບັນລຸຜົນສຳເລັດການຈັດຕັ້ງປະຕິບັດກິດຈະກຳທີ່ກຳນົດໄວ້ໃນແຜນວຽກ;
- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ໃຫ້ຄວາມສຳຄັນ ແລະ ເຄົາລົບຕໍ່ວຽກງານການພັດທະນາ ແລະ ການປະກອບສ່ວນຂອງອົງການ INGOs ແລະ CSOs ເພື່ອຊ່ວຍວຽກງານການພັດທະນາ

ໂດຍລວມ (ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ) ຂອງ ສປປ ລາວ, ໂດຍສະເພາະແມ່ນການເຂົ້າເຖິງກຸ່ມຄົນດ້ອຍໂອກາດ ແລະ ເຂດຫ່າງໄກຊອກຫຼີກ.

## 4. ບູລິມະສິດຂອງຜູ້ມີສ່ວນຮ່ວມ

ບູລິມະສິດຂອງຜູ້ມີສ່ວນຮ່ວມ ສາມາດແບ່ງອອກເປັນທັງພາຍໃນ ແລະ ພາຍນອກ ໃນການຈຳແນກເນື້ອຫາທີ່ສຳຄັນໃນລາຍລະອຽດໃຫ້ຕອບສະໜອງຄວາມຕ້ອງການຂອງແຕ່ລະພາກສ່ວນ ເພື່ອໃຫ້ສາມາດນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບໄດ້ຫຼາຍຂຶ້ນ.

**ພາຍໃນປະກອບມີ:**

- ຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ
- ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ
- ຈຸດປະສານງານ ປພຍ ແຫ່ງຊາດ
- ບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ (ຜູ້ຮັບຜິດຊອບ ການລາຍງານ ປພຍ (SDGr) ແລະ ຜູ້ຈັດຕັ້ງປະຕິບັດ ປພຍ (SDGi)

**ພາຍນອກປະກອບມີ:**

- ອົງການເຄືອຂ່າຍ ສປຊ
- ບັນດາຄູ່ຮ່ວມພັດທະນາທີ່ມີຢູ່ ແລະ ອື່ນໆ
- ພາກສ່ວນສັງຄົມ
- ສະຖາບັນການສຶກສາ
- ພາກເອກະຊົນ
- ສື່ມວນຊົນ
- ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGOs)
- ອົງການຈັດຕັ້ງທາງສັງຄົມ (CSOs)

ບູລິມະສິດຂອງຜູ້ມີສ່ວນຮ່ວມນີ້ ແມ່ນພື້ນຖານສຳລັບກິດຈະກຳການສື່ສານ ໃນແຜນດຳເນີນງານການສື່ສານ, ໂຄສະນາ ແລະ ເຜີຍແຜ່ ການຈັດຕັ້ງປະຕິບັດວາລະ 2030 ເພື່ອການພັດທະນາແບບຍືນຍົງຢູ່ ສປປ ລາວ. ເນື້ອຫາຂອງຂໍ້ຄວາມແມ່ນຂຶ້ນກັບລະດັບຄວາມຮັບຮູ້ຂອງຜູ້ເຂົ້າຮ່ວມ, ລວມທັງຄາດໝາຍ ແລະ ຈຸດປະສົງຂອງການສື່ສານ. ຂໍ້ຄວາມທີ່ສຳຄັນຂອງການສື່ສານ, ໂຄສະນາ ແລະ ເຜີຍແຜ່ ຈະຖືກດັດແກ້ໃຫ້ແທດເໝາະ, ສອດຄ່ອງ ແລະ ມີປະສິດທິພາບດັ່ງຕໍ່ໄປນີ້:

| | |
|---|---|
| ພາຍໃນ | **ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ:** ປັບປຸງຄຸນນະພາບຂອງບົດລາຍງານການສື່ສານ ແລະ ຊຸກຍູ້ໃຫ້ເຈົ້າໜ້າທີ່ພາກລັດເຜີຍແຜ່ແນວທາງນະໂຍບາຍຂອງລັດຖະບານ ແລະ ກິດຈະກຳກ່ຽວກັບ ປພຍ ທົ່ວບັນດາກະຊວງ ແລະ ອົງການລັດທຽບເທົ່າກະຊວງ ແລະ ຊຸກຍູ້ຊ່ອງທາງການສື່ສານຂອງລັດຖະບານເພື່ອເພີ່ມຄວາມຮັບຮູ້ກ່ຽວກັບ ປພຍ. |
| | **ຈຸດປະສານງານ ປພຍ:** ປັບປຸງການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ປພຍ ໃຫ້ບັນດາກະຊວງທີ່ກ່ຽວຂ້ອງ ແລະ ອົງການລັດທຽບເທົ່າກະຊວງ ເພື່ອໃຫ້ສອດຄ່ອງກັນກັບເປົ້າໝາຍຂອງແຜນດຳເນີນງານການສື່ສານ,ໂຄສະນາ ແລະ ເຜີຍແຜ່ ຈັດຕັ້ງປະຕິບັດວາລະປີ 2030 ເພື່ອການພັດທະນາແບບຍືນຍົງຢູ່ ສປປ ລາວ. |
| | **ຜູ້ຮັບຜິດຊອບ** SDGr: ປັບປຸງມາດຕະຖານການລາຍງານໃຫ້ສອດຄ່ອງກັບຄວາມຕ້ອງການທີ່ກຳນົດໄວ້ໂດຍກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ. |
| | **ຜູ້ຮັບຜິດຊອບ** SDGi: ປັບປຸງຄວາມເຂົ້າໃຈຂອງຂໍ້ມູນມະຫາພາກ (Metadata) ຂອງແຕ່ລະຕົວຊີ້ບອກຂອງ ປພຍ ແລະ ຊ່ວຍກຳນົດແຜນພາບຂໍ້ມູນ )Infrograph( ຂອງພາກສ່ວນທີ່ກ່ຽວຂ້ອງກັບຕົວຊີ້ບອກ ປພຍ. |
| | **ຈຸດປະສານງານ ປພຍ/ ຜູ້ຮັບຜິດຊອບ** SDGr/ **ຜູ້ຮັບຜິດຊອບ** SDGi: ເປັນເຈົ້າການ ແລະ ລິເລີ່ມແນວຄວາມຄິດຂອງຕົນ ແລະ ຍຸດທະສາດການສື່ສານເພື່ອສຸມໃສ່ຍົກລະດັບຄວາມຮັບຮູ້ກ່ຽວກັບ ປພຍ ໃຫ້ຜູ້ເຂົ້າຮ່ວມພາຍນອກໂດຍກົງ ແລະ ສະໜອງຂໍ້ສະເໜີ / ບົດລາຍງານ / ຄຳແນະນຳ ໃຫ້ແກ່ ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຈັດຕັ້ງປະຕິບັດ ປພຍ ເພື່ອ ສະໜັບສະໜູນ ແລະ ຮັບປະກັນຄວາມສອດຄ່ອງຂອງທິດທາງ ປພຍ. |
